San Diego Unified School District

SD USD

*Fact Sheet*

# ໜ່ວຍປ້ອງກັນໂຈນ ຜູ້ຮ້າຍ

ພະແນກຕຳຣວດບໍຣິການໂຮງຮຽນເຂດສຶກສາແຊນດິເອໂກ (SDCS) ໄດ້ຮັກສາຄວາມປອດພັຍ ແລະ ປ້ອງກັນຄວາມປອດພັຍແກ່ພວກນັກຮຽນ ແລະ ພະນັກງານຂອງພວກເຮົາທຸກໆຄົນ, ແກ່ໂຮງຮຽນ, ແກ່ຕຶກຫ້ອງການປົກຄອງ ແລະ ຕຶກຫ້ອງການອື່ນໆທີ່ຢູ່ໃນເຂດສູນກາງສຶກສາຂອງພວກເຮົາ.

ພະແນກຕຳຣວດປະຈຳໂຮງຮຽນໄດ້ຕັ້ງ *ໜ່ວຍປ້ອງກັນຜູ້ຮ້າຍ* (CPU) ຂຶ້ນ, ພ້ອມທັງການຊີ້ນຳທິດທາງຂອງຮ້ອຍໂທຕຳຣວດ ແລະ ຕຳຣວດບໍຣິການຊຸມຊົນສອງຄົນ ເພື່ອປະຕິບັດໂຄງການ POP. ສິ່ງນີ້ຮວມມີ *ອາສາສມັກເປັນຕຳຣວດລາດຕະເວນໂຮງຮຽນ* (SPVP), *ນັກຮຽນຕໍ່ຕ້ານຄວາມຮຸນແຮງ* (SAVE), ໂຄງການ *ດູແລຮັກສາໂຮງຮຽນ* (school watch), ແລະ ໂຄງການ *kidz watch* ພ້ອມທັງການຊອກຫາເດັກເສັຍ. ນອກນີ້, ເຈົ້າໜ້າທີ່ຕຳຣວດນີ້ຍັງໄດ້ໄປຢ້ຽມຢາມບ້ານ ເພື່ອໃຫ້ການອົບຮົມພໍ່ແມ່ແລະເດັກກ່ຽວກັບການໜີໂມງຮຽນຂອງເດັກ ແລະ ຟັງລາຍງານກ່ຽວກັບຜູ້ຮ້າຍອ້າຍໂຈນ.

ຢູ່ໃນ 187 ໂຮງຮຽນຂອງສູນກາງສຶກສາ, ເຈົ້າໜ້າທີ່ຕຳຣວດໄດ້ເຂົ້າຮ່ວມປະຊຸມສອບຖາມກ່ຽວກັບຂໍ້ຂ້ອງໃຈເລື້ອງການປະຕິງານຂອງເຈົ້າໜ້າທີ່ຕຳຣວດ ແລະ ຄວາມປອດພັຍຂອງພວກນັກຮຽນ. ເຂົາເຈົ້າປະຕິບັດໜ້າທີ່ເປັນຜູ້ປະສານງານຂອງການປະຊຸມລະຫວ່າງໂຮງການເມືອງ ແລະ ຊຸມຊົນກັບ ກົມຕຳຣວດ, ຊຸມຊົນ ແລະ ໂຮງຮຽນສູນກາງສຶກສາ, ແລະ ໄດ້ເຂົ້າຮ່ວມຫລາຍໆການຈັດຕັ້ງທີ່ມີຢູ່ໂຮງຮຽນຕ່າງໆ.

ໜ່ວຍປ້ອງກັນຜູ້ຮ້າຍ ໄດ້ປະຕິບັດໜ້າທີ່ກວດລະບົບການຮັກສາຄວາມປອດພັຍຂອງໂຮງຮຽນຕ່າງໆ, ໂທຣະສັບຫາ ໜ່ວຍປ້ອງກັນພັຍຜ່ານການວາງແຜນສິ່ງແວດລ້ອມ (CPTED), ເພື່ອວາງຂໍ້ກຳນົດໃຫ້ຖືກຕາມລະບົບ ແລະ ສະພາບແວດລ້ອມທີ່ໂຮງຮຽນຈັດໄວ້ ເພື່ອຈຳກັດກິຈກັມການກະທຳຜິດກົດໝາຍ ຫລື ເລື້ອງກ່ຽວກັບຄວາມປອດພັຍ. ປະຈຸບັນນີ້, ການກວດກາໄດ້ສຳເຣັດແລ້ວທີ່ໂຮງຮຽນປະຖົມ Edison, Miramar Ranch, ແລະ Rosa Parks, ໂຮງຮຽນພາກກາງ Mann, ໂຮງຮຽນມັທຍົມ Clairemont, Kearny, Scripps Ranch, ແລະ University City High, ແລະ ຮວມທັງການສ້ອມແປງ ແລະ ການດຳເນີນງານນຳດ້ວຍ.

## ຂໍ້ສລູບ

- ❖ ເຈົ້າໜ້າທີ່ຕຳຣວດເຂດສຶກສາໂຮງຮຽນແຊນດິເອໂກໄດ້ຮັກສາໂຄງການຮັກສາຄວາມປອດພັຍທົ່ວໂຮງຮຽນໄວ້ຫລາຍໆໂຄງການຊຶ່ງຈັດຂຶ້ນເປັນໜ່ວຍປ້ອງກັນຜູ້ຮ້າຍອ້າຍໂຈນ (CPU)
- ❖ ນາຍຮ້ອຍໂທຕຳຣວດຜູ້ນຶ່ງ ແລະ ຕຳຣວດບໍຣິການຊຸມຊົນສອງຄົນກຳກັບຊີ້ນຳທຸກໆໂຄງການ
- ❖ ໂຄງການແກ້ໄຂບັນຫາ (POP)
- ❖ ອາສາສມັກເປັນຕຳຣວດລາດຕະເວນໂຮງຮຽນ
- ❖ ນັກຮຽນຕໍ່ຕ້ານການຮຸນແຮງທຸກແຫ່ງຫົນ (SAVE)
- ❖ ການດູແລຮັກສາໂຮງຮຽນ.

ນຶ່ງຂອງໂຄງການ *ນັກຮຽນຕໍ່ຕ້ານຄວາມຮຸນແຮງທຸກໆບ່ອນ* (SAVE) *ນັ້ນ*, ໄດ້ຕັ້ງສາຂາຂຶ້ນຢູ່ທີ່ໂຮງຮຽນຂອງພວກເຮົາ. SAVE ແມ່ນການຈັດຕັ້ງລະດັບຊາດຈັດຂຶ້ນເພື່ອສົ່ງເສີມຄວາມປອດພັຍຂອງນັກຮຽນ. ມີລາຍລະອຽດເພີ້ມເຕີມໄວ້ໃຫ້ທ່ານອ່ານໄດ້ທີ່ http://www.nationalsave.org/. ປະຈຸບັນ, ໂຮງຮຽນປະຖົມ Knox ແລະ Sherman ພ້ອມທັງໂຮງຮຽນພາກກາງ Keiller ແລະ ໂຮງຮຽນ Memorial Academy ໄດ້ໂຄງການເຫລົ່ານີ້ແລ້ວ ແລະ ວາງແຜນຈະຂຍາຍອອກໄປຫາໂຮງຮຽນອື່ນໆຢູ່.

*ໜ່ວຍປ້ອງກັນຜູ້ຮ້າຍ* (CPU) ຍັງໄດ້ດຳເນີນການຈັດໂຄງການ School Watch Program ແລະ Kidz Watch Program ຂຶ້ນ ອີກ. ຢູ່ໃນໂຄງການ School Watch Program, ບ້ານໃກ້ເຮືອນຄຽງທີ່ອາສັຍຢູ່ອ້ອມແອ້ມໂຮງຮຽນນັ້ນ ແມ່ນຖືກຊັກຊວນໃຫ້ມີໜ້າທີ່ເບິ່ງແຍກໂຮງຮຽນຢ່າງຈິງຈັງເພື່ອສອດຊ່ອງດູແລເບິ່ງການທຳລາຍ ແລະ ການຂີ້ລັກຕ່າງໆ. Kidz Watch Program ເຮັດໃຫ້ຄອບຄົວ ຮັກສາກິຈກັມນອກບ້ານຂອງເຂົາເຈົ້າເດີນໄປເປັນລະບົບ, ເຊັ່ນວ່າ ການທັດນ້ຳຫຍ້າ, ການທຳສວນ, ການລ້າງຣົຖ, ຂະນະດຽວກັນ ກໍຈັບຫູຈັບຕາເບິ່ງພວກນັກຮຽນກ່ອນໂມງເຂົ້າຮຽນ ແລະ ຫລັງຈາກເລີກໂຮງຮຽນນຳພ້ອມ.

ລາຍລາອຽດກ່ຽວກັບເຈົ້າໜ້າທີ່ຕຳຣວດບໍຣິການແຊນດິເອໂກນັ້ນ, ຂໍໃຫ້ອ່ານເບິ່ງທີ່ຕາໜ່າງຂ່າວ http://prod031.sandi.net/policeservices/.

ລາຍລະອຽດຕິດຕໍ່ຫາ: **Police Services Department: (619) 725 – 7000 Administration, (619) 291 – 7678 Dispatch**

**www.sandi.net**